LALCO
LAO ASEAN LEASING PUBLIC COMPANY

# ບົດບັນທຶກ ກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2023 ຄັ້ງວັນທີ 28 ສິງຫາ ປີ 2024 ຂອງ ບໍລິສັດ ລາວອາຊຽນເຊົ່າສິນເຊື່ອ ມະຫາຊົນ

ກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2023 ຂອງ ບໍລິສັດ ລາວອາຊຽນເຊົ່າສິນເຊື່ອ ມະຫາຊົນ (ລອຊ) ໄດ້ຈັດຂຶ້ນໃນວັນທີ 28 ສິງຫາ ປີ 2024 ຕອນບ່າຍ ເວລາ 13:30 ໂມງ ທີ່ບໍລິສັດ ລາວອາຊຽນ ເຊົ່າສິນເຊື່ອ ມະຫາຊົນ ຊັ້ນ 4, ຕຶກ NNN, ຖະໜົນ ບຸລິຈັນ, ບ້ານໂພນສີນວນ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປລາວ, ໂດຍການເປັນປະທານຂອງ ທ່ານ ນາງ ປາລະມີ ພົມມະສອນ ຜູ້ທີ່ໄດ້ຮັບມອບໝາຍ ຈາກ ທ່ານນາງ Yuki Scott, ປະທານສະມາຊິກສະພາບໍລິຫານ. ກອງປະຊຸມມີຜູ້ຖືຮຸ້ນເຂົ້າຮ່ວມທັງໝົດ ຈຳນວນ 05 ທ່ານ ໂດຍແມ່ນຜູ້ຖືຮຸ້ນມອບສິດ ໃຫ້ຜູ້ຕ່າງໜ້າເຂົ້າຮ່ວມແທນທັງ 05 ທ່ານ, ເຊິ່ງຖືຮຸ້ນລວມກັນເປັນ 298,362,900 ຮຸ້ນ ຫຼື 98,96% ຂອງຈຳນວນຮຸ້ນທັງໝົດຂອງບໍລິສັດ ຖືວ່າ ຄົບອົງປະຊຸມຕາມກົດໝາຍ ແລະ ລະບຽບການຂອງບໍລິສັດ.

ເຊິ່ງພິທີກອນໄດ້ແຈ້ງໃຫ້ຜູ້ຖືຮຸ້ນຊາບກ່ຽວກັບຄວາມຄາດເຄື່ອນ ລະຫວ່າງໜັງສືເຊີນ ກັບມະຕິຕົກລົງປະຊຸມສະພາບໍລິຫານ ກ່ຽວວາລະ ກອງປະຊຸມທີ 2 ໂດຍປ່ຽນຈາກພິຈາລະນາ ແລະ ຮັບຮອງ ເອົາບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2024 ຄັ້ງທີ 1 ມາເປັນ ພິຈາລະນາ ແລະ ຮັບຮອງ ເອົາບົດບັນທຶກກອງປະຊຸມວິສາມັນຜູ້ຖືຮຸ້ນປະຈຳປີ 2024 ຄັ້ງທີ 1 ແລະ ອະທິບາຍກ່ຽວກັບຄວາມຄາດເຄື່ອນໃນການແປພາສາ ລະຫວ່າງພາສາລາວ ແລະ ພາສາອັງກິດ, ຫຼັງຈາກນັ້ນ ທ່ານ ນາງ ປາລະມີ ພົມມະສອນ, ປະທານກອງປະຊຸມ ໄດ້ກ່າວເປີດກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2023 ທີ່ຈັດຂຶ້ນ ໂດຍການຕ້ອນຮັບຜູ້ຖືຮຸ້ນທຸກທ່ານ ແລະ ມອບໃຫ້ພິທີກອນເປັນຜູ້ແນະນຳຜູ້ເຂົ້າຮ່ວມກ່ອງປະຊຸມ.

ພິທີກອນ ໄດ້ແນະນຳ ຜູ້ຕາງໜ້າຂອງສະມາຊິກສະພາບໍລິຫານ ແລະ ພະນັກງານທີ່ກ່ຽວຂ້ອງທີ່ເຂົ້າຮ່ວມກອງປະຊຸມດັ່ງນີ້:

<u>ສະມາຊິກສະພາບໍລິຫານ</u>

| ຊື່ | ຕຳແໜ່ງ | ມອບສິດໃຫ້ |
|---|---|---|
| ທ່ານ ນາງ. Yuki Scott | ປະທານ | ທ່ານ ນາງ ປາລະມີ ພົມມະສອນ |
| ທ່ານ. Mitsuteru Nagaya | ຮອງປະທານ | ທ່ານນາງ ວັນເຮືອງ ສີດາວັນ |
| ທ່ານ. Yoshihito Oshima | ສະມາຊິກ | ທ່ານນາງ ລັດຕະນະພອນ ນາໄພວົງ |
| ທ່ານ. Hirofumi Inada | ສະມາຊິກ | ທ່ານນາງ ພຸດທະລົມ ນັນທະວົງ |
| ທ່ານ ນາງ Harumi Ide | ສະມາຊິກ | ທ່ານ ອາວົງ ແສນອຸໄທ |

LALCO
LAO ASEAN LEASING PUBLIC COMPANY

**ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ**

| ຊື່ | ຜູ້ຕາງໜ້າ |
|---|---|
| ທ່ານນາງ. ວັນນະພອນ ສຸນັນທາ | ຜູ້ຕາງໜ້າຈາກ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ, ໃນນາມຄະນະຕິດຕາມ ແລະ ປະເມີນການດຳເນີນກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2023 |
| ທ່ານນາງ ອອນອານີ ບຸນນະສິນ | ຜູ້ຜູ້ຕາງໜ້າຈາກ ຕະຫຼາດຫຼັກຊັບລາວ, ໃນນາມຄະນະຕິດຕາມ ແລະ ປະເມີນການດຳເນີນກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2023 |
| ທ່ານນາງ. ເພີ່ມພອນ ພິມວົງສາ | ຜູ້ຖືຮຸ້ນລາຍຍ່ອຍຂອງ ລອຊ, ໃນນາມຄະນະຕິດຕາມກອງປະຊຸມ ແລະ ກວດສອບການລົງຄະແນນສຽງ |

| ຊື່ | ໜ້າທີ່ |
|---|---|
| ທ່ານ ຈັນພະພອນ ແສງສີງຄຳ | ພິທີກອນ |
| ທ່ານນາງ ປານ ແສງດາລາ | ພະນັກງານຕ້ອນຮັບ ແລະ ລົງທະບຽນ |
| ທ່ານນາງ ປານ ແສງດາລາ | ພະນັກງານລົງຄະແນນສຽງ |
| ທ່ານນາງ ປານ ແສງດາລາ | ພະນັກງານຄວບຄຸມລະບົບອີເລັກໂຕນິກ |

ຫລັງຈາກນັ້ນ, ພິທີກອນ ໄດ້ອະທິບາຍວິທີການລົງຄະແນນສຽງໃຫ້ຜູ້ເຂົ້າຮ່ວມກອງປະຊຸມ ແລະ ລາຍງານແຕ່ລະວາລະຂອງກອງປະຊຸມດັ່ງຕໍ່ໄປນີ້:

1. **ການລົງຄະແນນສຽງ:**
   - ທ່ານຜູ້ຖືຮຸ້ນໜຶ່ງທ່ານ ມີຄະແນນສຽງເຊິ່ງເທົ່າກັບຈຳນວນຮຸ້ນທັງໝົດ ຂອງທ່ານ; ໜຶ່ງຮຸ້ນເທົ່າກັບໜຶ່ງສຽງ.
   - ໃນການລົງຄະແນນສຽງແຕ່ລະວາລະ, ປະທານຈະຖາມກອງປະຊຸມວ່າ ວ່າມີຜູ້ຖືຮຸ້ນໃດທີ່ບໍ່ເຫັນດີ. ຖ້າຫາກ ຜູ້ຖືຮຸ້ນໃດທີ່ບໍ່ເຫັນດີ ໃຫ້ທ່ານນັ້ນກາເຄື່ອງໝາຍໃສ່ຊ່ອງລົງມະຕິບໍ່ເຫັນດີໃນບັດລົງຄະແນນສຽງ ທີ່ເຈົ້າໜ້າທີ່ໄດ້ແຈກຢາຍກ່ອນການປະຊຸມ ແລະ ຍົກບັດທີ່ກາເຄື່ອງໝາຍນັ້ນຂຶ້ນມາຈົນກວ່າເຈົ້າໜ້າທີ່ຈະເກັບບັດລົງຄະແນນ ເພື່ອນຳໄປກວດນັບຄະແນນສຽງໃນວາລະດັ່ງກ່າວ. ສຳລັບຜູ້ຖືຮຸ້ນທີ່ບໍ່ຍົກບັດຂຶ້ນມາ ຖືວ່າຜູ້ຖືຮຸ້ນດັ່ງກ່າວເຫັນດີກັບມະຕິທີ່ໄດ້ສະເໜີໃນກອງປະຊຸມ.
   - ສຳລັບຜູ້ຖືຮຸ້ນມອບສິດ ໃຫ້ຕົວແທນເຂົ້າຮ່ວມກອງປະຊຸມ ແລະ ລົງຄະແນນສຽງ ຕາມຄວາມຮຽກຮ້ອງຕ້ອງການຂອງຜູ້ຖືຮຸ້ນຕາມທີ່ໄດ້ລະບຸໄວ້ໃນໃບມອບສິດ, ບໍລິສັດໄດ້ນຳເອົາການລົງຄະແນນສຽງດັ່ງທີ່ຜູ້ຖືຮຸ້ນລະບຸໄວ້ໃນໃບມອບສິດ ໄປປັນທຶກຄະແນນໄວ້ລ່ວງໜ້າເປັນທີ່ຮຽບຮ້ອຍແລ້ວ. ເພື່ອອຳນວຍຄວາມສະດວກໃຫ້ຜູ້ຕາງໜ້າດັ່ງກ່າວບໍ່ຈຳເປັນຕ້ອງລົງຄະແນນສຽງອີກເທື່ອໜຶ່ງໃນກອງປະຊຸມ.

LALCO
LAO ASEAN LEASING PUBLIC COMPANY

**2. ການນັບຄະແນນສຽງ**

- ການນັບຜົນຄະແນນສຽງໃນແຕ່ລະວາລະ ແມ່ນໄດ້ນັບຄະແນນສຽງຂອງຜູ້ຖືຮຸ້ນໃນກອງປະຊຸມ ແລະ ຄະແນນສຽງຂອງຜູ້ຖືຮຸ້ນທີ່ ມອບໝາຍໃຫ້ຜູ້ຕາງໜ້າທີ່ ບໍລິສັດໄດ້ບັນທຶກໄວ້ລ່ວງໜ້າ ໃນເວລາທີ່ຜູ້ຕ່າງໜ້າລົງທະບຽນ ເຂົ້າຮ່ວມກອງປະຊຸມ ທີ່ອອກສຽງບໍ່ ເຫັນດີ ມາຫັກລົບອອກ ຈາກຈຳນວນຮຸ້ນທັງໝົດຂອງຜູ້ທີ່ເຂົ້າຮ່ວມກອງປະຊຸມ ແລະ ລົງຄະແນນສຽງໃນແຕ່ລະວາລະ.
- ປະທານກອງປະຊຸມຈະປະກາດຜົນການລົງຄະແນນສຽງ ໃນແຕ່ລະວາລະໃຫ້ກອງປະຊຸມໄດ້ຮັບຊາບ ພາຍຫຼັງການລົງຄະແນນສຽງ ໃນແຕ່ລະວາລະສິ້ນສຸດລົງ ໂດຍຈະແຍກຄະແນນສຽງເຫັນດີ ແລະ ບໍ່ເຫັນດີວ່າມີຈັກສຽງ ແລະ ເປັນຈຳນວນຈັກສ່ວນຮ້ອຍ. ໃນ ກໍລະນີ ຜູ້ຖືຮຸ້ນໄດ້ລົງຄະແນນສຽງບໍ່ເຫັນດີ ພາຍຫຼັງທີ່ປະທານ ປະກາດໃຫ້ກອງປະຊຸມຮັບຊາບຜົນການລົງຄະແນນສຽງໃນແຕ່ ວາລະສິ້ນສຸດລົງແລ້ວນັ້ນ, ບໍລິສັດ ຈະບໍ່ນັບເອົາຄະແນນສຽງດັ່ງກ່າວ ມານັບເປັນຄະແນນສຽງຕື່ມອີກ.
- ໂດຍອີງຕາມລະບຽບການ ແລະ ກົດໝາຍທີ່ກ່ຽວຂ້ອງ, ໃນກອງປະຊຸມວິສາມັນຜູ້ຖືຮຸ້ນຂອງບໍລິສັດໃນຄັ້ງນີ້ ບໍ່ອະນຸຍາດໃຫ້ຜູ້ ສັງເກດການ ມີຄຳຖາມໃນເວລາດຳເນີນການປະຊຸມ, ມີພຽງແຕ່ຜູ້ຖືຮຸ້ນເທົ່ານັ້ນມີສິດຕັ້ງຄຳຖາມ ແລະ ປະກອບຄຳຄິດເຫັນ ກ່ຽວ ກັບວາລະການປະຊຸມ.

ພິທີກອນເຊີນທ່ານປະທານດຳເນີນກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2023 ໂດຍລາຍງານແຕ່ລະວາລະ ດັ່ງຕໍ່ໄປນີ້:

**ວາລະທີ 1 ພິຈາລະນາ ແລະ ຮັບຮອງເອົາບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນ ສຳລັບສິກປີ 2022**

ປະທານໄດ້ສະເໜີຈຸດປະສົງ, ເຫດຜົນ ຕໍ່ທີ່ປະຊຸມ ດັ່ງນີ້:

ກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2022 ໄດ້ຈັດຂຶ້ນໃນວັນທີ 2 ມິຖຸນາ 2023, ເຊິ່ງບໍລິສັດໄດ້ເຮັດບົດບັນທຶກປະຊຸມດັ່ງກ່າວ ໂດຍມີ ລາຍລະອຽດແມ່ນໄດ້ຕິດຂັດພ້ອມໜັງສືເຊີນປະຊຸມແລ້ວ

ສະພາບໍລິຫານໄດ້ພິຈາລະນາຢ່າງລະອຽດແລ້ວເຫັນດີໃຫ້ກອງປະຊຸມຜູ້ຖືຮຸ້ນພິຈາລະນາຮັບຮອງເອົາບົດ ບັນທຶກກອງ ປະຊຸມຜູ້ຖືຮຸ້ນປະຈຳປີ 2022

ປະທານກອງປະຊຸມ ໄດ້ເປີດໂອກາດໃຫ້ຜູ້ຖືຮຸ້ນມີຄຳຖາມທີ່ກ່ຽວຂ້ອງກັບວາລະນີ້ ແຕ່ບໍ່ມີຄຳຖາມໃດໆ.

ຫຼັງຈາກນັ້ນ ປະທານກອງປະຊຸມ ໄດ້ສະເໜີໃຫ້ຜູ້ຖືຮຸ້ນໃນກອງປະຊຸມ ພິຈາລະນາ ແລະ ແລະ ຮັບຮອງເອົາບົດບັນທຶກກອງປະຊຸມສາມັນຜູ້ ຖືຮຸ້ນ ສຳລັບສິກປີ 2022. ວາລະນີ້ຕ້ອງໄດ້ຮັບການເຫັນດີຈາກການລົງຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທັງໝົດ ທີ່ເຂົ້າຮ່ວມກອງ ປະຊຸມ.

**ມະຕິກອງປະຊຸມ**: ຫຼັງຈານັ້ນປະທານປະກາດຜົນການລົງຄະແນນສຽງເຊິ່ງມີລາຍລະອຽດດັ່ງນີ້:

- ກອງປະຊຸມໄດ້ເຫັນດີ 298,362,900 ສຽງ ຫຼື ເທົ່າກັບ 100%
- ບໍ່ເຫັນດີ 0 ສຽງ ຫຼື ເທົ່າກັບ 0%
- ລວມ 298,362,900 ສຽງ ຫຼື ເທົ່າກັບ 100%

**ວາລະທີ 2 ພິຈາລະນາ ແລະ ຮັບຮອງເອົາບົດບັນທຶກກອງປະຊຸມວິສາມັນຜູ້ຖືຮຸ້ນປະຈຳປີ 2024 ຄັ້ງທີ 1**

ປະທານໄດ້ສະເໜີຈຸດປະສົງ, ເຫດຜົນ ຕໍ່ທີ່ປະຊຸມ ດັ່ງນີ້:

LAO ASEAN LEASING PUBLIC COMPANY

ກອງປະຊຸມວິສາມັນຜູ້ຖືຮຸ້ນປະຈຳປີ 2024 ຄັ້ງທີ 1 ໄດ້ຈັດຂຶ້ນໃນວັນທີ 6 ມິຖຸນາ 2024, ເຊິ່ງບໍລິສັດໄດ້ເຮັດບົດບັນທຶກປະຊຸມດັ່ງກ່າວ

ສະພາບໍລິຫານໄດ້ພິຈາລະນາຢ່າງລະອຽດແລ້ວເຫັນດີໃຫ້ກອງປະຊຸມຜູ້ຖືຮຸ້ນພິຈາລະນາຮັບຮອງເອົາບົດ ບັນທຶກກອງ ປະຊຸມວິສາມັນຜູ້ຖືຮຸ້ນປະຈຳປີ 2024 ຄັ້ງທີ 1.

ປະທານກອງປະຊຸມ ໄດ້ເປີດໂອກາດໃຫ້ຜູ້ຖືຮຸ້ນມີຄຳຖາມທີ່ກ່ຽວຂ້ອງກັບວາລະນີ້ ແຕ່ບໍ່ມີຄຳຖາມໃດໆ.

ຫຼັງຈາກນັ້ນ ປະທານກອງປະຊຸມ ໄດ້ສະເໜີໃຫ້ຜູ້ຖືຮຸ້ນໃນກອງປະຊຸມ ພິຈາລະນາ ແລະ ແລະ ຮັບຮອງເອົາບົດບັນທຶກກອງປະຊຸມວິສາມັນ ຜູ້ຖືຮຸ້ນປະຈຳປີ 2024 ຄັ້ງທີ 1. ວາລະນີ້ຕ້ອງໄດ້ຮັບການເຫັນດີຈາກການລົງຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທັງໝົດ ທີ່ເຂົ້າຮ່ວມ ກອງປະຊຸມ.

**ມະຕິກອງປະຊຸມ**: ຫຼັງຈານັ້ນປະທານປະກາດຜົນການລົງຄະແນນສຽງເຊິ່ງມີລາຍລະອຽດດັ່ງນີ້:

- ເຫັນດີ 298,362,900 ສຽງ ຫຼື ເທົ່າກັບ 100%
- ບໍ່ເຫັນດີ 0 ສຽງ ຫຼື ເທົ່າກັບ 0%
- ລວມ 298,362,900 ສຽງ ຫຼື ເທົ່າກັບ 100%

**ວາລະທີ 3 ພິຈາລະນາ ແລະ ຮັບຮອງ ບົດລາຍງານການເຄື່ອນໄຫວທຸລະກິດ ແລະ ເອກະສານລາຍງານການເງິນທີ່ຜ່ານການກວດສອບ ສຳລັບປີ 2023**

ປະທານໄດ້ສະເໜີຈຸດປະສົງ, ເຫດຜົນ ຕໍ່ທີ່ປະຊຸມ ດັ່ງນີ້:

ສຳລັບ ບົດລາຍງານການເຄື່ອນໄຫວທຸລະກິດ ແລະ ບົດລາຍງານການກວດສອບ ສຳລັບປີ 2023 ໂດຍມີລາຍລະອຽດແມ່ນໄດ້ຕິດຂັດພ້ອມ ໜັງສືເຊີນປະຊຸມແລ້ວ

ປະທານກອງປະຊຸມ ໄດ້ເປີດໂອກາດໃຫ້ຜູ້ຖືຮຸ້ນມີຄຳຖາມທີ່ກ່ຽວຂ້ອງກັບວາລະນີ້ ແຕ່ບໍ່ມີຄຳຖາມໃດໆ.

ຫຼັງຈາກນັ້ນ ປະທານກອງປະຊຸມ ໄດ້ສະເໜີໃຫ້ຜູ້ຖືຮຸ້ນໃນກອງປະຊຸມ ພິຈາລະນາ ແລະ ແລະ ຮັບຮອງບົດລາຍງານການເຄື່ອນໄຫວທຸລະ ກິດ ແລະ ບົດລາຍງານການກວດສອບ ສຳລັບປີ 2023. . ວາລະນີ້ຕ້ອງໄດ້ຮັບການເຫັນດີຈາກການລົງຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນ ສຽງທັງໝົດ ທີ່ເຂົ້າຮ່ວມກອງປະຊຸມ.

**ມະຕິກອງປະຊຸມ**: ຫຼັງຈານັ້ນປະທານປະກາດຜົນການລົງຄະແນນສຽງເຊິ່ງມີລາຍລະອຽດດັ່ງນີ້:

- ເຫັນດີ 298,362,900 ສຽງ ຫຼື ເທົ່າກັບ 100%
- ບໍ່ເຫັນດີ 0 ສຽງ ຫຼື ເທົ່າກັບ 0%
- ລວມ 298,362,900 ສຽງ ຫຼື ເທົ່າກັບ 100%

LALCO
LAO ASEAN LEASING PUBLIC COMPANY

**ວາລະທີ 4 ພິຈາລະນາ ແລະ ຮັບຮອງ ການບໍ່ຈ່າຍເງິນປັນຜົນຈາກຜົນການດຳເນີນງານ ສຳລັບປີ 2023 ເພື່ອນຳໃຊ້ເປັນທຶນໃນການດຳເນີນທຸລະກິດ**

ປະທານໄດ້ສະເໜີຈຸດປະສົງ, ເຫດຜົນ ຕໍ່ທີ່ປະຊຸມ ດັ່ງນີ້:

ສະພາບໍລິຫານ ເຫັນດີອະນຸມັດການບໍ່ຈ່າຍເງິນປັນຜົນຈາກຜົນການດຳເນີນງານ ສຳລັບປີ 2023 ເພື່ອນຳໃຊ້ເປັນທຶນໃນ ການດຳເນີນທຸລະກິດ.

ປະທານກອງປະຊຸມ ໄດ້ເປີດໂອກາດໃຫ້ຜູ້ຖືຮຸ້ນມີຄຳຖາມທີ່ກ່ຽວຂ້ອງກັບວາລະນີ້ ແຕ່ບໍ່ມີຄຳຖາມໃດໆ.

ຫຼັງຈາກນັ້ນ ປະທານກອງປະຊຸມ ໄດ້ສະເໜີໃຫ້ຜູ້ຖືຮຸ້ນໃນກອງປະຊຸມ ຮັບຮອງ ການບໍ່ຈ່າຍເງິນປັນຜົນຈາກຜົນການດຳເນີນງານ ສຳລັບປີ 2023 ເພື່ອນຳໃຊ້ເປັນທຶນໃນການດຳເນີນທຸລະກິດ. . ວາລະນີ້ຕ້ອງໄດ້ຮັບການເຫັນດີຈາກການລົງຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງ ທັງໝົດ ທີ່ເຂົ້າຮ່ວມກອງປະຊຸມ.
**ມະຕິກອງປະຊຸມ**: ຫຼັງຈານັ້ນປະທານປະກາດຜົນການລົງຄະແນນສຽງເຊິ່ງມີລາຍລະອຽດດັ່ງນີ້:

- ເຫັນດີ 298,362,900 ສຽງ ຫຼື ເທົ່າກັບ 100%
- ບໍ່ເຫັນດີ 0 ສຽງ ຫຼື ເທົ່າກັບ 0%
- ລວມ 298,362,900 ສຽງ ຫຼື ເທົ່າກັບ 100%

**ວາລະທີ 5 ພິຈາລະນາ ແລະ ຮັບຮອງ ແຜນການດຳເນີນທຸລະກິດຂອງ ລອຊ ສຳລັບປີ 2024**

ປະທານໄດ້ສະເໜີຈຸດປະສົງ, ເຫດຜົນ ຕໍ່ທີ່ປະຊຸມ ດັ່ງນີ້:

ສຳລັບ ແຜນການດຳເນີນທຸລະກິດຂອງ ລອຊ ສຳລັບປີ 2024 ແມ່ນໄດ້ຮັບການອະນຸມັດຈາກສະພາບໍລິຫານເປັນທີ່ຮຽບຮ້ອຍແລ້ວ ລາຍ ລະອຽດແມ່ນໄດ້ຕິດຂັດພ້ອມໜັງສືເຊີນປະຊຸມແລ້ວ.

ປະທານກອງປະຊຸມ ໄດ້ເປີດໂອກາດໃຫ້ຜູ້ຖືຮຸ້ນມີຄຳຖາມທີ່ກ່ຽວຂ້ອງກັບວາລະນີ້ ແຕ່ບໍ່ມີຄຳຖາມໃດໆ.

ຫຼັງຈາກນັ້ນ ປະທານກອງປະຊຸມ ໄດ້ສະເໜີໃຫ້ຜູ້ຖືຮຸ້ນໃນກອງປະຊຸມ ພິຈາລະນາ ແລະ ຮັບຮອງ ແຜນການດຳເນີນທຸລະກິດຂອງ ລອຊ ສຳລັບປີ 2024. . ວາລະນີ້ຕ້ອງໄດ້ຮັບການເຫັນດີຈາກການລົງຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທັງໝົດ ທີ່ເຂົ້າຮ່ວມກອງປະຊຸມ.
**ມະຕິກອງປະຊຸມ**: ຫຼັງຈານັ້ນປະທານປະກາດຜົນການລົງຄະແນນສຽງເຊິ່ງມີລາຍລະອຽດດັ່ງນີ້:

- ເຫັນດີ 298,362,900 ສຽງ ຫຼື ເທົ່າກັບ 100%
- ບໍ່ເຫັນດີ 0 ສຽງ ຫຼື ເທົ່າກັບ 0%
- ລວມ 298,362,900 ສຽງ ຫຼື ເທົ່າກັບ 100%

**ວາລະທີ 6 ພິຈາລະນາ ແລະ ຮັບຮອງ ບໍລິສັດ ເອີນ ແອນ ຍັງ ລາວຈຳກັດ ເປັນຜູ້ກວດສອບສຳລັບປີສິ້ນສຸດ 31 ທັນວາ 2024**

ປະທານໄດ້ສະເໜີຈຸດປະສົງ, ເຫດຜົນ ຕໍ່ທີ່ປະຊຸມ ດັ່ງນີ້:

ບໍລິສັດ Ernst & Young Lao Co. Ltd ແມ່ນໄດ້ເປັນຜູ້ກວດສອບ ພາຍນອກຂອງ ບໍລິສັດ ມາໄດ້ຫຼາຍປີ, ເປັນຜູ້ກວດສອບທີ່ມີ ປະສົບການ ແລະ ເຂົ້າໃຈກ່ຽວກັບການກັບລະບົບການເຄື່ອນໄຫວຂອງບໍລິສັດດີ. ດັ່ງນັ້ນ, ສະພາບໍລິຫານຈຶ່ງມີຄວາມເຊື່ອໝັ້ນ ແລະ ເຫັນດີ ສະເໜີ ໃຫ້ກອງປະຊຸມພິຈາລະນາ ແລະ ຮັບຮອງການແຕ່ງຕັ້ງ ບໍລິສັດ Ernst & Young Lao Co. Ltd ເປັນຜູ້ກວດສອບ ໃນປີ 2024, ສຳລັບຄ່າ ບໍລິການກວດສອບແມ່ນມອບໃຫ້ສະພາບໍລິຫານຄົ້ນຄ້ວາພິຈາລະນາ ແລະ ອະນຸມັດຕາມຄວາມເໝາະສົມ.

ປະທານກອງປະຊຸມ ໄດ້ເປີດໂອກາດໃຫ້ຜູ້ຖືຮຸ້ນມີຄຳຖາມທີ່ກ່ຽວຂ້ອງກັບວາລະນີ້ ແຕ່ບໍ່ມີຄຳຖາມໃດໆ.

ຫຼັງຈາກນັ້ນ ປະທານກອງປະຊຸມ ໄດ້ສະເໜີໃຫ້ຜູ້ຖືຮຸ້ນໃນກອງປະຊຸມ ພິຈາລະນາ ແລະ ຮັບຮອງ ບໍລິສັດ ເອີນ ແອນ ຍັງ ລາວຈຳກັດ ເປັນຜູ້ກວດສອບສຳລັບປີສິ້ນສຸດ 31 ທັນວາ 2024. . ວາລະນີ້ຕ້ອງໄດ້ຮັບການເຫັນດີຈາກການລົງຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງ ທັງໝົດ ທີ່ເຂົ້າຮ່ວມກອງປະຊຸມ.

**ມະຕິກອງປະຊຸມ**: ຫຼັງຈານັ້ນປະທານປະກາດຜົນການລົງຄະແນນສຽງເຊິ່ງມີລາຍລະອຽດດັ່ງນີ້:

- ເຫັນດີ 298,362,900 ສຽງ ຫຼື ເທົ່າກັບ 100%
- ບໍ່ເຫັນດີ 0 ສຽງ ຫຼື ເທົ່າກັບ 0%
- ລວມ 298,362,900 ສຽງ ຫຼື ເທົ່າກັບ 100%

**ວາລະທີ 7 ພິຈາລະນາຮັບຮອງເອົາ ແລະ ອະນຸມັດການກູ້ຢືມເງິນຈາກ ທະນາຄານພາຍໃນປະເທດ/ອື່ນໆ ຈຳນວນ 70,000,000,000-120,000,000,000 ກີບ ແລະ 10,000,000-30,000,000ໂດລາ**

ປະທານໄດ້ສະເໜີຈຸດປະສົງ, ເຫດຜົນ ຕໍ່ທີ່ປະຊຸມ ດັ່ງນີ້:

ສະພາບໍລິຫານເຫັນດີ ອະນຸມັດການກູ້ຢືມເງິນຈາກ ທະນາຄານພາຍໃນປະເທດ/ອື່ນໆ ຈຳນວນ 70,000,000,000-120,000,000,000 ກີບ ແລະ 10,000,000-30,000,000 ໂດລາ ໂດຍ ມອບໃຫ້ ສະພາບໍລິຫານ ຫຼື ຜູ້ທີ່ໄດ້ຮັບແຕ່ງຕັ້ງຈາກສະພາບໍລິຫານ ເປັນຜູ້ມີອຳນາດໃນການພິຈາລະນາ ແລະ ດຳເນີນວຽກງານການກູ້ຢືມ

ປະທານກອງປະຊຸມ ໄດ້ເປີດໂອກາດໃຫ້ຜູ້ຖືຮຸ້ນມີຄຳຖາມທີ່ກ່ຽວຂ້ອງກັບວາລະນີ້ ແຕ່ບໍ່ມີຄຳຖາມໃດໆ.

ຫຼັງຈາກນັ້ນ ປະທານກອງປະຊຸມ ໄດ້ສະເໜີໃຫ້ຜູ້ຖືຮຸ້ນໃນກອງພິຈາລະນາຮັບຮອງເອົາ ແລະ ອະນຸມັດການກູ້ຢືມເງິນຈາກ ທະນາຄານພາຍໃນປະເທດ/ອື່ນໆ ຈຳນວນ 70,000,000,000-120,000,000,000 ກີບ ແລະ 10,000,000-30,000,000ໂດລາ. ວາລະນີ້ຕ້ອງໄດ້ຮັບການເຫັນດີຈາກການລົງຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທັງໝົດ ທີ່ເຂົ້າຮ່ວມກອງປະຊຸມ.

**ມະຕິກອງປະຊຸມ**: ຫຼັງຈານັ້ນປະທານປະກາດຜົນການລົງຄະແນນສຽງເຊິ່ງມີລາຍລະອຽດດັ່ງນີ້:

- ເຫັນດີ 298,362,900 ສຽງ ຫຼື ເທົ່າກັບ 100%
- ບໍ່ເຫັນດີ 0 ສຽງ ຫຼື ເທົ່າກັບ 0%
- ລວມ 298,362,900 ສຽງ ຫຼື ເທົ່າກັບ 100%

ປະທານກອງປະຊຸມ ໄດ້ກ່າວສະແດງຄວາມຂອບໃຈຜູ້ຖືຮຸ້ນ ແລະ ຕາງໜ້າຜູ້ຖືຮຸ້ນ ທີ່ໄດ້ໃຫ້ກຽດເຂົ້າຮ່ວມກອງປະຊຸມ ແລະ ໄດ້ປະກາດ ປິດກອງປະຊຸມໃນເວລາ

LALCO
LAO ASEAN LEASING PUBLIC COMPANY

(ຜູ້ຕາງໜ້າ) ປະທານກອງປະຊຸມ

ຜູ້ບັນທຶກ:

ທ່ານ ນາງ ປາລະມີ ພິມມະສອນ

ທ່ານນາງ ປານ ແສງດາລາ